# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 23 ພຶສພາ 2010 (5-23-2010)**

---

## ຂ້ອຍຂໍສາບານວ່າຈະສັດຊື່ຕໍ່ເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ມັດທາຍ 5:27-30; ສຸພາສິດ 5:15-21; 6:25-32

## ບົດຮຽນນີ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດຊ່ວຍພວກທີ່ເຖົ້າກະສຽນໃຫ້ມອງເຫັນວ່າການບໍ່ສັດຊື່ໃນຊີວິດແຕ່ງງານສາມາດມີມາໄດ້ຫຼາຍແບບ. ພວກຜົວແລະເມັຍທັງຫຼາຍຈະໄດ້ຮັບຄຳໜູນໃຈທີ່ຈະເຮັດໃຫ້ຄຳສັນຍາທີ່ຈະສັດຊື່ໃນຊີວິດແຕ່ງງານຂອງພວກເຂົາຄົບເຕັມສົມບູນ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ແມ່ນກ່ຽວກັບຄຳບັນຊາຂອງພຣະເຈົ້າໃຫ້ສັດຊື່ໃນຊີວິດແຕ່ງງານ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ຄວາມກົດດັນທາງສັງຄົມເປັນຮາກຖານ-ອັນເລິກທີ່ທ້າທາຍໃຫ້ມີແນວຄິດກ່ຽວກັບທັມມະຊາດຂອງຄວາມສັດຊື່ໃນຊີວິດແຕ່ງງານ. ສມັຍນີ້, ອິນເທີແນັດກໍເປັນຊ່ອງທາງນຳໜ້າຊັກນຳໄປສູ່ຄວາມບໍ່ສັດຊື່ກັບຄວາມສຳພັນອັນບໍ່ແມ່ນຂອງແທ້ທີ່ປາກົດອອກມາທາງສາຍອາກາດແລະເປັນທາງອັນຍິ່ງໃຫຍ່ເຂົ້າສູ່ການເບິ່ງໜັງລາມົກ. ຄວາມບໍ່ສັດຊື່ຕໍ່ຊີວິດແຕ່ງງານສາມາດມາໃນຮູບແບບການຫຼິ້ນຊູ້ທາງໃຈ ຫຼືຄວາມຮູ້ສຶກເປັນນຶ່ງດຽວກັນກັບບາງຄົນນອກຈາກຄູ່ຄອງຂອງທ່ານ. ມາດຕະຖານຂອງພຣະເຈົ້າບໍ່ໄດ້ປ່ຽນແປງ. ຝ່າຍພວກຜົວແລະເມັຽທັງຫຼາຍຕ້ອງສັດຊື່ຕໍ່ຊຶ່ງກັນແລະກັນ.

ການແຕ່ງງານແມ່ນສິ່ງດຽວເທົ່ານັ້ນທີ່ພຣະເຈົ້າໄດ້ແຕ່ງຕັ້ງຂຶ້ນເພື່ອເປັນທາງຂອງຄວາມຄົບຖ້ວນທາງເພດ. ຝ່າຍໂລກເວົ້າວ່າຊີວິດແມ່ນການຊອກຫາຄວາມປາຖນາແລະເອົາຄວາມພໍໃຈສ່ວນຕົວເໜືອກ່ວາການຊອກເຮັດຄວາມດີຕໍ່ຄົນອື່ນໆ. ການເປັນນຶ່ງດຽວກັນທາງເພດໃນຊີວິດແຕ່ງງານແມ່ນຂອງຂວັນອັນສວຍງາມຈາກພຣະເຈົ້າແຫ່ງຄວາມຮັກ. ໃນອີກດ້ານນຶ່ງ, ການສັບປ່ຽນຄູ່ຮ່ວມທາງເພດ, ກໍທຽບກັບລະຫວ່າງຮ້ານອາຫານດ່ວນກັບການຕຽມອາຫານແລງໃນວັນຄຣິສມາດ. ຊຶ່ງມັນໂຫດຮ້າຍໄປກວ່າຄວາມຕຸ້ຍແລະໄຂມັນເກາະຄ້າງໃນເສັ້ນເລືອດ, ການເມີນເສີຍຕໍ່ມາດຕະຖານຂອງພຣະເຈົ້າໃນການເປັນນຶ່ງດຽວທາງເພດມັນເຮັດໃຫ້ອົກຫັກ, ທຳລາຍຄວາມສຳພັນຕ່າງໆ, ແລະມ້າງເພການແຕ່ງງານ.

## <u>ສຶກສາພຣະຄັມພີ</u>

### 1. <u>ຫຼີກເວັ້ນການຫຼິ້ນຊູ້ທາງໃຈ</u> (ມັດທາຍ 5:27-30)

ພຣະຄຣິດໄດ້ສອນວ່າການມີຄວາມຄຶດທີ່ຖືກຕ້ອງດີກວ່າການເຊື່ອຟັງພາຍນອກແລະມັນແມ່ນຜົນສະທ້ອນຂອງຄວາມສັມພັນຂອງພວກເຮົາກັບພຣະເຈົ້າ. ການສ້າງຊີວິດຂອງພວກເຮົາເທິງພື້ນຖານຂອງພຣະຄຣິດແລະການ

ສິດສອນຂອງພຣະອົງຊ່ວຍພວກເຮົາໃຫ້ຫຼີກເວັ້ນມໍຣະສຸມບາງຢ່າງໃນຊີວິດແລະມີຄວາມອົດທົນດົນນານຕໍ່ຄົນອື່ນໆ. ພຣະເຈົ້າໄດ້ສ້າງການເປັນນຶ່ງດຽວກັນທາງເພດລະຫວ່າງຜົວແລະເມັຽໃຫ້ເປັນສິ່ງທີ່ສວຍງາມແລະມີຄວາມໝາຍໃນການສະແດງອອກຂອງຄວາມຮັກຕໍ່ຊຶ່ງກັນແລະກັນ.-ແຕ່ວ່າການສັບປ່ຽນທີ່ຊົ່ວຮ້າຍຫຼາຍຢ່າງເກີດຂຶ້ນ.

ພຣະຄຣິດໄດ້ກ່າວເຖິງຄວາມຜິດບາບທາງເພດແບບທົ່ວໆໄປເມື່ອພຣະອົງເວົ້າວ່າຜູ້ໃດເບິ່ງແມ່ຍິງດ້ວຍໃຈກຳໜັດໃນຍິງນັ້ນ-ຊຶ່ງໝາຍເຖິງການສືບຕໍ່ເບິ່ງທີ່ບໍ່ແມ່ນພຽງແຕ່ກາຍກັນໄປແອບນຶ່ງເທົ່ານັ້ນ-ຜູ້ນັ້ນໄດ້ຫຼີ້ນຊູ້ໃນໃຈກັບຍິງນັ້ນແລ້ວ. ການວາດພາບເພື່ອນມະນຸດອີກຄົນນຶ່ງເໝືອນດັ່ງວັດຖຸແລ້ວມີຕັນຫາມັນບໍ່ພຽງແຕ່ນຳໄປສູ່ການຫຼີ້ນຊູ້ເທົ່ານັ້ນແຕ່ເປັນການຕັດສິນໃຈຫຼີ້ນຊູ້ໃນໃຈແລ້ວ. ໃນການເວົ້າເຣື່ອງຕັນຫາທາງເພດ, ທ່ານມາຕິນລູເຕີໄດ້ກ່າວໄວ້ວ່າລາວບໍ່ສາມາດທີ່ຈະຫ້າມນົກບິນຂ້າມຫົວຂອງລາວ, ແຕ່ວ່າລາວສາມາດຫ້າມບໍ່ໃຫ້ນົກເຮັດຮັງໃສ່ຜົມຂອງລາວ. ການທີ່ຈະພົບກັບຮູບລາມົກກໍງ່າຍດາຍແລະຄວາມຮູ້ສຶກຕໍ່ການແຕ່ງງານໃຫ້ເປັນຜົວນຶ່ງເມັຽດຽວກໍໜ້ອຍລົງມັນຈຶ່ງງ່າຍຫຼາຍທີ່ຈະກ້າວເຂົ້າສູ່ການປະພຶດທາງເພດທີ່ບໍ່ສັດຊື່ຕໍ່ຊີວິດແຕ່ງງານ.

ພວກຜູ້ຊາຍຂ້ອນຂ້າງທີ່ຢາກໄດ້ການເປັນນຶ່ງດຽວທາງຮ່າງກາຍແລະຜູ້ຍິງຂ້ອນຂ້າງຢາກຈະເປັນນຶ່ງດຽວກັນທາງດ້ານຄວາມຮູ້ສຶກ: ແຜນການຂອງພຣະເຈົ້າໃນຊີວິດແຕ່ງງານແມ່ນມີໄວ້ສຳລັບທັງສອງ. ພວກຜູ້ຊາຍມີຄວາມດຶງດູດສູ່ຮູບພາບໂປ້(ລາມົກ)ກວ່າພວກຜູ້ຍິງ, ແຕ່ວ່າມີຜູ້ຍິງບາງຄົນກໍຫັນເຂົ້າສູ່ພາບລາມົກເຊັ່ນດຽວກັນ. ເຖິງແມ່ນວ່າພວກຜູ້ຍິງອາດຈະຂ້ອນຂ້າງໂນ້ມໄປຕົກໃນຫຼຸມແຫ່ງຄວາມຮູ້ສຶກຫຼາຍກວ່າພວກຜູ້ຊາຍກໍຕາມ, ພວກຜູ້ຊາຍກໍຄອງຄອຍຫາຄວາມເປັນນຶ່ງດຽວກັນໃນຄວາມຮູ້ສຶກເຊັ່ນດຽວກັນ. ການເປັນນຶ່ງດຽວກັນໃນຄວາມຮູ້ສຶກທີ່ນອກຈາກຄູ່ຄອງຂອງທ່ານແລ້ວ, ບໍ່ວ່າຈະເປັນຕົວຕໍ່ຕົວຫຼືທາງອິນເທີແນັດ, ມັນກໍເຂົ້າເຂດອັນຕະລາຍເຊັ່ນດຽວກັນ. ມັນບໍ່ມີຫຍັງຜິດດອກທີ່ມີໝູ່ເພື່ອນ, ແຕ່ວ່າການເຂົ້າໃກ້ຊິດກັບຜູ້ໃດຜູ້ນຶ່ງເພື່ອຄວາມພໍໃຈໃນສິ່ງທີ່ບໍ່ໄດ້ຕາມຄວາມຕ້ອງການສຳລັບການເປັນນຶ່ງດຽວກັນໃນຊີວິດແຕ່ງງານຂອງທ່ານທີ່ເຮັດໃຫ້ທ່ານເຫີນຫ່າງຈາກຄູ່ຄອງຂອງທ່ານແລະເຮັດໃຫ້ຊີວິດການແຕ່ງງານຂອງທ່ານອ່ອນເພັຽລົງ.

ການຫ່ວງໃຍຂອງພຣະຄຣິດກໍຄືວ່າພວກເຮົາຈະຮັບມືກັບການທົດລອງທາງເພດນີ້ແນວໃດ ການໃຊ້ພາບປະກອບປຽບທຽບ, ພຣະຄຣິດໄດ້ເວົ້າວ່າຈົ່ງຄວັດຕາເບື້ອງຂວາຂອງທ່ານອອກເສັຽຫຼືຕັດມືເບື້ອງຂວາຂອງທ່ານອອກເສັຽຖ້າຫາກພວກມັນເປັນເຫດໃຫ້ທ່ານເຮັດຜິດບາບ. ໃນຄຳສິດສອນນີ້ແມ່ນໝາຍເຖິງຕ້ອງເຮັດທຸກວິທີທາງເພື່ອຫຼີກເວັ້ນການທົດລອງທາງເພດ. ພວກເຮົາຕ້ອງເປັນຄືໂຍເຊັບຜູ້ທີ່ແລ່ນໜີຈາກເມັຽຂອງໂປຕີຟາ (ປະຖົມມະການ 39:6-12), ແລະບໍ່ໃຫ້ຄືກັບດາວິດຜູ້ທີ່ໄດ້ເຊີນເອົາເບັດຊີບາມາໃນຣາຊວັງຂອງຕົນ (2 ຊາມູເອນ 11:2-4).

ເພື່ອຫຼີກເວັ້ນການຫຼີ້ນຊູ້ທາງໃຈພວກເຮົາສາມາດປ້ອງກັນຄອມພິວເຕີທີ່ຢູ່ໃນບ້ານຂອງພວກເຮົາໂດຍການປິດພາບແລະແວັບໄຊລາມົກຕ່າງໆດ້ວຍເຄື່ອງກັ່ນຕອງແລະໂດຍການເອົາຄອມພິວເຕີໄວ້ທີ່ຫ້ອງຮັບແຂກບ່ອນທີ່ທຸກຄົນສາມາດສັງເກດເຫັນການໃຊ້ມັນ. ເມື່ອທ່ານເດີນທາງ, ຕ້ອງບອກໃຫ້ໂຮງແຮມຫຼືບ່ອນພັກເຊົາໃຫ້ປິດຊ່ອງລາມົກໃນໂທຣະທັດແລະໃຫ້ເອົາຮູບຄອບຄົວຂອງທ່ານຕິດຕົວໄປນຳແລະໃຫ້ຍອງໄວ້ເທິງໂທຣະທັດ. ຊອກຫາເພື່ອນຜູ້ທີ່ຈະສາມາດເຕືອນທ່ານແລະຈົ່ງຫຼີກເວັ້ນໃນການທີ່ຈະເຮັດໃຫ້ຕົນເອງຕົກເປັນເຫຍື່ອຂອງຕັນຫາທາງເພດຢ່າງງ່າຍດາຍ.

## 2. <u>ຊອກຫາຄວາມເພິ່ງພໍໃຈໃນຕົວຄູ່ຄອງຂອງທ່ານ</u> (ສຸພາສິດ 5:15-21)

ໂຊໂລໂມນໄດ້ໃຫ້ຄຳແນະນຳຕໍ່ລູກຊາຍຂອງລາວໃຫ້ຫຼີກເວັ້ນຈາກການຫຼີ້ນຊູ້ ແລະໃຫ້ຊອກຫາຄວາມເພິ່ງພໍໃຈເຣື່ອງເພດໃນເມັຽຂອງຕົນເມື່ອໄດ້ໃນຕອນຍັງໜຸ່ມ. ຄຳເວົ້າທີ່ເປັນພາບທີ່ໄດ້ໃຊ້ບັນລະຍາຍໃນເຣື່ອງການເປັນນຶ່ງດຽວກັນທາງເພດໃນຊີວິດແຕ່ງງານ: **ຖັງນ້ຳ, ນ້ຳສ້າງ, ນ້ຳບໍ່, ສາຍນ້ຳໄຫຼ, ແລະນ້ຳພຸ**. ໂດຍການສົມທຽບເຣື່ອງເພດໃສ່ກັບແຫຼ່ງທີ່ມາຂອງນ້ຳ, ພຣະເຈົ້າໄດ້ດົນໃຈໂຊໂລໂມນໃຫ້ບັນລະຍາຍເຖິງຄວາມເລິກຂອງຄວາມໝາຍໃນການເປັນນຶ່ງດຽວກັນເຣື່ອງເພດລະຫວ່າງຜົວແລະເມັຽ. ການເປັນ**"ກາຍອັນດຽວກັນ"**ໝາຍຄວາມວ່າ"*ພວກຜົວຄວນຈະຮັກເມັຽຂອງ*

*ພວກເຂົາເໝືອນຮັກຮ່າງກາຍຂອງພວກເຂົາເອງ"* (ເອເຟໂຊ 5:28); ພວກຜົວຕ້ອງນັບຖືແລະຫ່ວງໃຍຢ່າງນີ້ມນອນຕໍ່ຄວາມຕ້ອງການຂອງເມັຽພວກເຂົາ.

ທັສນະຝ່າຍໂລກກ່ຽວເຣື່ອງເພດວ່າມັນເປັນພຽງສິ່ງທີ່ເພີ້ມຄວາມສນຸກສນານສ່ວນຕົວເຮັດໃຫ້ຂອງຂວັນຂອງພຣະເຈົ້າບໍ່ມີຣາຄາ. ການມີເພດນອກຈາກການແຕ່ງງານແມ່ນບິດບັງວຕໍ່ມາດຕະຖານຂອງພຣະເຈົ້າ, ການບໍ່ຖືຮັກສາຄໍາສາບານຂອງການແຕ່ງງານ, ແລະບົກພ່ອງຕໍ່ຂີດໝາຍຂອງການເປັນນຶ່ງດຽວກັນກັບຄູ່ຄອງຕລອດຊີວິດ. ຜູ້ໄດ້ຖືກດົນໃຈໃຫ້ບັນທຶກກໍາສົມທຽບເມັຽໃສ່**ກວາງແມ່ທີ່ໜ້າຮັກ**, **ກວາງນ້ອຍທີ່ຮູ້ຄຸນ**ຕົວນຶ່ງ, ຊຶ່ງເປັນສັດທີ່ຖືກສ້າງຢ່າງສວຍງາມ. ບໍ່ວ່າຈະເປັນຊາຍຫຼືຍິງ, **ຖ້າຫຼົງຕາມສະເໜ**ກັບຄົນອື່ນແມ່ນຄວາມໂງ່ຈ້າ. ຜົວແລະເມັຽຄວນຈະ**ຫຼົງໄຫຼ**ໃນ**ຄວາມຮັກອັນຕລອດໄປ**ໃນຕົວຂອງພວກຕົນ ຊຶ່ງກັນແລະກັນ.

ທັງພວກຜົວແລະພວກເມັຽຄວນຈະເຮັດທຸກສິ່ງເພື່ອຮັກສາໃຫ້ບັນຍາກາດຄຶກຄັກມີຊີວິດຊີວາຢູ່ແລະລຸກໄໝ້ຂຶ້ນໃໝ່ໃນຄວາມສັມພັນ. ການແຕ່ງງານທີ່ມີຄວາມສັມພັນອັນແໜ້ນໜາ, ກໍຄືການຢູ່ຮ່ວມກັນໄດ້ຂອງສອງຊີວິດ, ທີ່ບໍ່ສາມາດແບ່ງປັນໃຫ້ແກ່**ຄົນແປກໜ້າ**ທີ່ຜ່ານກາຍໄປ. ບັນຍາກາດທີ່ໃຫ້ອາຣົມຄຶກຄັກແລະຄວາມຮັກສະເໜຫາອັນແທ້ຈິງທີ່ມີຕໍ່ຊຶ່ງກັນແລະກັນມັນບໍ່ຂັດແຍ້ງກັບຝ່າຍວິນຍານອັນແທ້ຈິງນັ້ນ. ສິ່ງທີ່ໃຊ້ໄດ້ເປັນປະຈໍາຊຶ່ງຂໍແນະນໍາຮວມທັງ: ອອກໄປກິນເຂົ້າທາງນອກອາທິດລະເທື່ອ; ນັ່ງພັກຜ່ອນແລະໂອ້ລົມແລະຮັບຟັງຊຶ່ງກັນແລະກັນ; ອ່ານພຣະຄັມພີນໍາກັນ; ແບ່ງປັນສິ່ງສົນໃຈຕ່າງໆຮ່ວມກັນແລະໂອ້ລົມກັນກ່ຽວກັບເຣື່ອງເຫຼົ່ານັ້ນ; ແລະ, ຝຶກຝົນຄວາມຊໍານານໃນການຊອກຫາທາງເຮັດໃຫ້ມີບັນຍາກາດຄຶກຄັກຢູ່ສເມີ.

## 3. <u>ມອງເຫັນສິ່ງທີ່ຈະເປັນພັຍອັນຕະລາຍ</u> (ສຸພາສິດ 6:25-32)

ໂຊໂລໂມນໄດ້ອະທິບາຍເຖິງບັນຫາຫຼາຍຢ່າງທີ່ເປັນອັນຕະລາຍຂອງການຫຼິ້ນຊູ້. **ຕັນຫາ** ແມ່ນການເຫັນຜູ້ອື່ນເປັນພຽງສິ່ງຂອງຊື່ໆ, ບໍ່ເຫັນເຖິງການເປັນມະນຸດແລະ, ເມີນເສີຍຕໍ່ຂໍ້ຂັດແຍ້ງ, ພາບລາມົກ(ໂປ້)ບໍ່ແມ່ນວ່າເປັນຄະດີທີ່ບໍ່ມີຜູ້ຮັບເຄາະກັມ. ຊີວິດແທ້ຂອງຄົນໄດ້ຖືກທໍາລາຍ, ທັງຜູ້ສະແດງແລະຜູ້ເບິ່ງດ້ວຍ. ຄວາມ**ສວຍງາມ**ທາງຮ່າງກາຍຂອງຄົນທີ່ໄຮ້ສິນທັມກໍເປັນພາບລວງຕາໄດ້ດີທີ່ສຸດແຕ່ເບື້ອງໜັງທາງນອກ, ແຕ່ວ່າມັນບໍ່ເປີດເຜີຍໃຫ້ເຫັນຫົວໃຈ, ຄືບ່ອນທີ່ນິສັຍອັນທ່ຽງແທ້ໄດ້ຝັງຢູ່ນັ້ນ.

ການຫຼົງໄຫຼໄຝ່ຝັນກັບພາບລາມົກແມ່ນການເມີນເສີຍຕໍ່ສິ່ງທີ່ສໍາຄັນຂອງຄຸນສົມບັດແລະກຽດສັກສີ, ຕັ້ງຄວາມຫວັງໃສ່ສິ່ງທີ່ບໍ່ເປັນຂອງແທ້, ສົ່ງເສີມຄວາມເຫັນແກ່ຕົວຢ່າງເຕັມປ່ຽມໃນເຣື່ອງເພດ, ແລະນໍາຄວາມແຂງກະດ້າງອັນຍິ່ງໃຫຍ່ມາສູ່ຫົວໃຈແລະເພີ້ມການຫິວກະຫາຍຢາກເຫັນພາບລາມົກຫຼາຍຂຶ້ນ. ຜົນຂອງມັນຄືການຕີຕົວແຍກຈາກຄວາມສັມພັນອັນໃກ້ຊິດຂອງຄອບຄົວ, ຄວາມຮູ້ສຶກເຫີນຫ່າງຈາກຄູ່ຄອງ, ແລະການລົດຄ່າຂອງການເປັນຜົວດຽວເມັຽດຽວ. ການແຕ່ງງານ, ແລະການລ້ຽງ-ລູກ.

ພວກຜູ້ຊາຍແລະພວກຜູ້ຍິງຕ້ອງເຂົ້າໃຈພັຍອັນຕະລາຍອັນສູງທີ່ຈະເກີດຂຶ້ນໃນການຫຼິ້ນຊູ້ແລະຕັດສິນໃຈເດັດຂາດຕໍ່ການແຕ່ງງານດ້ວຍຄວາມສັດຊື່. ມີຫຼາຍຄົນສາມາດເປັນພຍານໄດ້ວ່າທັງຊາຍຫຼືຍິງທີ່ຫຼິ້ນຊູ້ມັນຕາມລ້າເຖິງສຸດຊີວິດຂອງທ່ານ; ການພະຍາຍາມຕັດອອກຈາກການແຕ່ງງານເພີ້ມຊຶ່ງເປັນການຫຼິ້ນຊູ້ນັ້ນມັນມີລາຄາແພງຫຼາຍ. ຄູ່ຮັກທີ່ເປັນແຟນໃໝ່ກໍອາດຈະໂທຣຫາຄູ່ຄອງ (ຫຼືຫົວໜ້າທີ່ທໍາງານ, ເພື່ອນບ້ານ, ແລະບາງຄັ້ງແມ້ກະທັ້ງສິດຍາພິບານ). ທ່ານບໍ່ສາມາດຫອບກອງໄຟໂດຍບໍ່ຖືກມັນໄໝ້ກໍບໍ່ໄດ້ແລະຜູ້ທີ່ຕັດສິນໃຈຫຼິ້ນຊູ້ກໍຂາດຄວາມຄິດ. ຜົນສຸດທ້າຍສໍາລັບຄົນທີ່ຜິດສິນທັມທາງເພດກໍຄືເຣື່ອງທີ່ຍັງເຫຼືອໄວ້ທີ່ຄົນຮັກຖືກທໍາລາຍພ້ອມທັງຕົວພວກເຂົາດ້ວຍ.

ໃນພຣະຄຣິດການໃຫ້ອະພັຍໂທດສາມາດເປັນໄປໄດ້ສເມີ. ສ່ວນປະກອບທີ່ສໍາຄັນສໍາລັບການສ້າງຕັ້ງການຄືນດີຢ່າງສໍາເຣັດຜົນຈາກການແຕ່ງງານທີ່ຫັກພັງແລະຖືກທໍາລາຍນັ້ນຕ້ອງແມ່ນການສາຣະພາບທີ່ແທ້ຈິງ, ຖ່ອມຕົວທີ່ສຸດ, ແລະຄວາມເຕັມໃຈທີ່ຈະເຮັດທຸກຢ່າງເພື່ອຈະໄດ້ມີການແຕ່ງງານແບບຄຣິສຕຽນ. ຕາມປົກກະຕິຄົນຕ້ອງການໃຫ້

ຄູ່ຄອງປ່ຽນແປງກ່ອນ, ແຕ່ວ່າການຫາຍດີທີ່ແທ້ຈິງຂອງການແຕ່ງງານແມ່ນເປັນໄປໄດ້ຖ້າຫາກຄູ່ຄອງແຕ່ລະຝ່າຍເຕັມໃຈທີ່ຈະປ່ຽນພວກເຂົາເອງກ່ອນເທົ່ານັ້ນ.

## ບົດຮຽນຊີວິດ

ການເປັນນຶ່ງດຽວກັນທາງເພດລະຫວ່າງຜົວແລະເມັຽແມ່ນຂອງຂວັນອັນຈີບງາມຈາກພຣະເຈົ້າເພື່ອເຮັດໃຫ້ການແຕ່ງງານເຂັ້ມແຂງຕິດແໜ້ນ ແລະແມ່ນສະຖາບັນດຽວທີ່ພຣະເຈົ້າສ້າງຕັ້ງຂຶ້ນໃຫ້ເປັນທາງທີ່ນຳຄວາມຄົບເຕັມທາງເພດ. ການປະພຶດໃນທາງຜິດຕ່າງໆແມ່ນຜົນຂອງຄວາມຄິດບໍ່ບໍຣິສຸດ, ດັ່ງນັ້ນຈຶ່ງໃຫ້ກຽດແກ່ພຣະຄຣິດດ້ວຍຄວາມຄິດຂອງທ່ານແລະຫຼີກເວັ້ນການຫຼິ້ນຊູ້ທາງໃຈ, ຄວາມຄິດທີ່ເປັນກິເລດຕັນຫາຕ່າງໆ, ຫຼືການສ້າງຄວາມຮູ້ສຶກອັນບໍ່ເໝາະສົມກັບຜູ້ໃດຜູ້ນຶ່ງນອກຈາກຄູ່ຄອງຂອງທ່ານ.

ຂ້ອຍສາມາດປັບປຸງການເປັນນຶ່ງດຽວທາງເພດໃນຊີວິດແຕ່ງງານໄດ້ຢ່າງໃດ?

- ເຮັດທຸກສິ່ງທຸກຢ່າງຈົນສຸດຄວາມສາມາດເພື່ອຫຼີກເວັ້ນການດຶງເຂົ້າສູ່ຄວາມຄິດແລະການປະພຶດຕ່າງໆທີ່ເປັນຜິດບາບ.
- ຄົ້ນໃຫ້ພົບໃໝ່ອີກເຖິງບັນຍາກາດຕຶກຄັກໃນຊີວິດແຕ່ງງານຂອງທ່ານແລະຊອກຫາຄວາມພໍໃຈກັບຄູ່ຄອງຂອງທ່ານ.
- ເບິ່ງໃຫ້ເຫັນວ່າການແຕ່ງງານແລະຄູ່ຄອງຂອງທ່ານແມ່ນຂອງຂວັນອັນລ້ຳຄ່າຈາກພຣະເຈົ້າແລະໃຊ້ເວລາກັບຊຶ່ງກັນແລະກັນ, ເຮັດສິ່ງທີ່ມີຄວາມໝາຍຮ່ວມກັນ, ແລະສະແດງຄວາມຮັກອອກຕໍ່ຊຶ່ງກັນແລະກັນ.
- ເຂົ້າໃຈແລະຫຼີກເວັ້ນອັນຕະລາຍທີ່ສ່ຽງຕໍ່ການທຳລາຍການແຕ່ງງານຂອງທ່ານສຳລັບການແນະນຳທີ່ບໍ່ຖືກຕ້ອງ, ການໂຕ້ຕອບໃນທາງຜິດບາບຫຼືມີຄວາມສຳພັນກັບຄົນອື່ນໆ.
- ຈົ່ງຈຳໄວ້ວ່າການຜິດສິນທັມທາງເພດເຮັດໃຫ້ອຶກຫັກ, ທຳລາຍການແຕ່ງງານ, ແລະທຳລາຍຊີວິດ-ດັ່ງນັ້ນຈົ່ງຫຼີກເວັ້ນການທີ່ຈະເຂົ້າຕິດພັນກັບການແຕ່ງງານເພີ້ມອີກອັນນຶ່ງ.

ໂຢເຊບໄດ້ໄກຈາກບ້ານເກີດເມືອງນອນ, ຖືກຄອບຄົວທັກທຽ້ງ, ແລະຖືກບັງຄັບຊັກນຳໂດຍເມັຽຂອງນາຍຈ້າງ, ເຖິງປານນັ້ນລາວກໍບໍ່ຕົກໃນການທົດລອງທາງເພດ. ລາວໄດ້ຖືກກ່າວຫາໃນທາງຜິດແລະໄດ້ຖືກຈຳຄຸກແຕ່ວ່າກຽດສັກສີຂອງລາວໄດ້ຕອບສນອງສິ່ງດີແກ່ລາວເອງ. ການຕັດສິນໃຈເດັດດ່ຽວຂອງລາວໃນການກະທຳສິ່ງທີ່ຖືກຕ້ອງບໍ່ວ່າຈະມີຫຍັງເກີດຂຶ້ນຕໍ່ການນັບຖືໃຫ້ກຽດພຣະເຈົ້າແລະນັ້ນກໍເປັນສິ່ງທີ່ນຳໃຫ້ລາວເຂົ້າສູ່ການເປັນຜູ້ນຳຂອງປະເທດ ແລະຊ່ວຍລາວໃຫ້ກາຍເປັນຄົນທີ່ມີຄຸນສົມບັດອັນເປັນທີ່ນັບຖືຂອງຄົນອື່ນໆ. ທັງສອງຢ່າງນີ້ຄືວິທີທີ່ພວກເຮົາໂຕ້ຕອບຕໍ່ການທົດລອງທາງເພດແລະວິທີທີ່ພວກເຮົານັບຖືຄູ່ຄອງຂອງພວກເຮົາດ້ວຍຄວາມຮັກສະເໜຫາແລະຄວາມສັດຊື່ເປີດເຜີຍໃຫ້ເຫັນເຖິງຄວາມເລິກຂອງຄວາມເຊື່ອພວກເຮົາໃນພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA